ທະນາຄານ ພາບລິກ ລາວ ຈຳກັດ
PUBLIC BANK LAO

# ຂໍ້ກຳນົດ ແລະ ເງື່ອນໄຂໃນການຄຸ້ມຄອງບັນຊີເງິນຝາກປະຢັດ

ຫົວຂໍ້ດ້ານລຸ່ມນີ້ແມ່ນ ຂໍ້ກຳນົດ ແລະ ເງື່ອນໄຂທົ່ວໄປ ຂອງການຄວບຄຸມການເປີດບັນຊີ ແລະ ການເຄື່ອນໄຫວຂອງບັນຊີເງິນຝາກປະຫຍັດ ກັບທະນາຄານ ພາບລິກ ລາວ ຈຳກັດ.

<u>**ຂໍ້ກຳນົດ ແລະ ເງື່ອນໄຂທົ່ວໄປ.**</u>

## 1. ການເປີດບັນຊີ.

1.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ໄດ້ຮັບອະນຸຍາດໃຫ້ເປີດບັນຊີ ແລະ ໄດ້ສະໜອງຂໍ້ມູນທີ່ຈຳເປັນສຳລັບການເປີດບັນຊີ ໂດຍຂໍຢັ້ງຢືນວ່າຂໍ້ມູນທັງໝົດ ແມ່ນຖືກຕ້ອງ. ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຈະແຈ້ງໃຫ້ທະນາຄານຮັບຊາບຖ້າຫາກວ່າມີການປ່ຽນແປງຂໍ້ມູນສ່ວນຕົວ ຫຼື ຂໍ້ມູນຂອງອົງກອນ.

1.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຮັບຮູ້ວ່າ ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດເປີດບັນຊີເງິນຝາກປະຢັດແບບປື້ມເງິນຝາກ ຫຼື ບັນຊີເງິນຝາກປະຢັດແບບບໍ່ມີປື້ມເງິນຝາກ (ຕໍ່ໄປນີ້ເອີ້ນວ່າ “ໃບແຈ້ງຍອດເຫຼືອບັນຊີ (Statement Saving Account)”). ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດຂໍປ່ຽນບັນຊີເງິນ ຝາກປະຢັດແບບມີປື້ມ ເປັນບັນຊີເງິນຝາກປະຢັດແບບໃບແຈ້ງຍອດເຫຼືອບັນຊີໄດ້ (Statement Saving Account) ໂດຍຂຶ້ນກັບການອານຸມັດຈາກທະນາຄານແຕ່ພຽງຜູ້ດຽວ.

## 2. ການຝາກເງິນ ແລະ ການຖອນເງິນ.

2.1 ທະນາຄານມີສິດກຳນົດ ແລະ ປ່ຽນແປງຈຳນວນເງິນຝາກຂັ້ນຕໍ່າ ທີ່ຈຳເປັນສຳລັບການເປີດບັນຊີ, ຈຳນວນເງິນຝາກຂັ້ນຕໍ່າ ຫຼື ຖອນເງິນຂັ້ນຕໍ່າສຸດ ໃນແຕ່ລະຄັ້ງ ແລະ ຍອດເງິນຕໍ່າສຸດ ທີ່ຈະຕ້ອງຮັກສາໄວ້ໃນບັນຊີຕະຫລອດເວລາ.

2.2 ຫາກວ່າມີລາຍການຮັບແຊັກ ຫຼື ເຄື່ອງມືທາງການເງິນອື່ນໆ ທີ່ຝາກເຂົ້າໃນບັນຊີຈະສະແດງເປັນລາຍຮັບທັນທີ, ແຕ່ຈຳນວນເງິນດັ່ງກ່າວຈະສາມາດໃຊ້ໄດ້ເມື່ອໄດ້ຮັບການຢືນຢັ້ນນຳເງິນເຂົ້າບັນຊີແລ້ວ. ໃນກໍລະນີທີ່ ເອກະສານທາງການເງິນຖືກປະຕິເສດການສັ່ງຈ່າຍ ຫຼື ມີຂໍ້ຜິດພາດ ຫຼື ມີການຮຽກຮ້ອງສິດທາງລົບຕໍ່ເອກະສານດັ່ງກ່າວ, ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະຕ້ອງຮັບຜິດຊອບພຽງຜູ້ດຽວໃນການຊຳລະຄືນຈຳນວນເງິນດັ່ງກ່າວ ແລະ ທະນາຄານມີສິດຫັກບັນຊີສຳລັບຈຳ ນວນເງິນຂອງລາຍການທີ່ຖືກຕີກັບ ແລະ ຄ່າທຳນຽມທີ່ເກີດຂຶ້ນ.

2.3 ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດຖອນເງິນອອກຈາກບັນຊີໄດ້ຕາມຈຳນວນເງິນທີ່ທະນາຄານກຳນົດ ຫຼື ປັບປຽນໄດ້ຕະຫຼອດເວລາ. ທັງນີ້ຂຶ້ນຢູ່ກັບຍອດຄົງເຫຼືອໃນບັນຊີ. ບັນຊີນີ້ຈະຖືກປິດເມື່ອມີການຖອນເງິນທັງຫມົດທີ່ມີຢູ່ໃນບັນຊີອອກ ຫຼື ໂດຍຂະບວນການທາງກົດຫມາຍ ຫຼື ອີງຕາມຂໍ້ 9.1 ນີ້.

2.4 ການຖອນເງິນສາມາດເຮັດໄດ້ໂດຍ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼື ໂດຍ ‘ບຸກຄົນທີສາມຜູ້ໄດ້ຮັບມອບສິດ’ ດັ່ງຕໍ່ໄປນີ້:

2.4.1 ໃນກໍລະນີຂອງບັນຊີເງິນຝາກປະຢັດແບບມີປື້ມ ຕ້ອງສະແດງປື້ມເງິນຝາກ, ຊຶ່ງບໍ່ສາມາດໂອນ ຫຼື ມອບສິດໃຫ້ຜູ້ອື່ນໄດ້, ພ້ອມທັງໃບຝາກ/ໃບຖອນ ທີ່ປະກອບຂໍ້ມູນຄົບຖ້ວນ ແລະ ເອກະສານຢັ້ງຢືນຕົວຕົນທີ່ທະນາຄານຍອມຮັບມາດຳເນີນການ.

2.4.2 ໃນກໍລະນີບັນຊີເງິນຝາກປະຢັດແບບບໍ່ມີປື້ມເງິນຝາກ (Statement Saving Account) ການຖອນເງິນສາມາດດຳເນີນການໄດ້ໂດຍການປະກອບແບບຟອມໃຫ້ຄົບຖ້ວນ ແລະ ສະແດງບັດປະຈຳຕົວເພື່ອຢັ້ງຢືນຕົວຕົນກັບ ທະນາຄານ.

'ບຸກຄົນທີສາມທີ່ໄດ້ຮັບມອບສິດ ຈະຕ້ອງຖືໜັງສືມອບສິດທີ່ໄດ້ລົງທະບຽນກັບທະນາຄານຮຽບຮ້ອຍແລ້ວ. ການໃຊ້ພຽງຈົດໝາຍຈະບໍ່ຖືວ່າເປັນການມອບສິດອຳນາດທີ່ພຽງພໍ ສຳຫຼັບວັດຖຸປະສົງດັ່ງກ່າວ. **ແຊັກບໍ່ສາມາດເບີກຖອນຈາກບັນຊີຝາກປະຫຍັດໄດ້.**

## 3. ປື້ມບັນຊີເງິນຝາກ.

3.1 ຈຳນວນເງິນຝາກ ແລະ ຈຳນວນການຖອນເງິນແມ່ນຈະຖືກບັນທຶກລົງໃນປື້ມບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ. ຂ້າພະເຈົ້າ/ພວກຂ້າພະເຈົ້າ ແມ່ນຈະກວດ ເບິ່ງປື້ມບັນຊີກ່ອນອອກຈາກສະຖານທີ່ຂອງທະນາຄານ ເພື່ອຮັບປະກັນວ່າທຸລະກຳຕ່າງໆໄດ້ດຳເນີນການຢ່າງຖືກຕ້ອງແລ້ວ.

3.2 ການຊຳລະໃດໆ ທີ່ທະນາຄານດຳເນີນການໂດຍອາໃສການສະແດງປື້ມເງິນຝາກ ຈະຖືວ່າມີຜົນເທົ່າກັບການຊຳລະເງິນໃຫ້ແກ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໂດຍຕົງ. ທັງນີ້ ທະນາຄານຈະຮັບການປົກປ້ອງຈາກການຮຽກຮ້ອງຕ່າງໆ ແລະ ຈະບໍ່ຕ້ອງຮັບຜິດຊອບຕໍ່ຄວາມສູນເສຍ ທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼື ບຸກຄົນຈາກ ພາກສ່ວນອື່ນ ອາດໄດ້ຮັບຈາກການຊຳລະເງິນດັ່ງກ່າວ.

3.3 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງເກັບຮັກສາປື້ມເງິນຝາກໄວ້ໃນທີ່ປອດໄພ ຫາກປື້ມເງິນຝາກສູນຫາຍ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕ້ອງແຈ້ງເປັນລາຍລັກອັກ ສອນໃຫ້ທະນາຄານຮັບຮູ້ທັນທີ ຫຼື ດ້ວຍຕົນເອງ. ເມື່ອທະນາຄານໄດ້ຮັບແຈ້ງເປັນລາຍລັກອັກສອນ, ທະນາຄານ ຈະລະງັບການເຮັດທຸລະກຳໃນບັນຊີ. ທັງນີ້ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍໃດໆທີ່ເກີດຂຶ້ນ ໃນກໍລະນີ ມີການຖອນເງິນໂດຍຜິດກົດໝາຍ ຫຼື ບໍ່ໄດ້ຮັບອະນຸຍາດຈາກບັນຊີກ່ອນທີ່ ທະນາຄານຈະໄດ້ຮັບການຢືນຢັນເປັນ ລາຍລັກອັກສອນ ຫຼື ແຈ້ງການດ້ວຍຕົວເອງກ່ຽວກັບການສູນຫາຍຂອງປື້ມເງິນຝາກ ບໍ່ວ່າຈະເປັນການສູນຫາຍທີ່ເກີດຈາກຄວາມປະໝາດ

ຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼື ບໍ່ກໍ່ຕາມ ທະນາຄານຈະຮຽກເກັບຄ່າທຳນຽມທີ່ກຳນົດໄວ້ ສຳລັບການອອກປຶ້ມເງິນຝາກຫົວໃໝ່ ໂດຍມີເງື່ອນໄຂ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕ້ອງລົງນາມໃນຟອມການຊົດໃຊ້ຄ່າເສຍຫາຍຕາມມາດຖານຂອງທະນາຄານ.

## 4. ໃບແຈ້ງຍອດເຫຼືອ (Statement).

4.1 ທະນາຄານໃຫ້ບໍລິການ e-Statement ຜ່ານລະບົບ e-Banking ຂອງທະນາຄານໃນຮູບແບບລາຍເດືອນ ຫຼື ຕາມທີ່ທະນາຄານກຳນົດ. ຂ້າພະເຈົ້າ/ພວກຂ້າພະເຈົ້າ ເປັນຜູ້ໃຊ້ບໍລິການ e-Banking ຂອງທະນາຄານ ແລະ ໄດ້ລົງທະບຽນສຳລັບການໃຊ້ບໍລິການ e-Statement ແລ້ວ, ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດດາວ ໂຫຼດໃບແຈ້ງຍອດເຫຼືອໃນຮູບແບບເອເລັກໂຕຣນິກ ຈາກເວັບໄຊທ໌ຂອງທະນາຄານ.

4.1.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງເຫັນດີ ແລະ ຍິນຍອມທີ່ຈະກວດສອບທຸກລາຍການໃນ e-Statement ຢ່າງຮອບຄອບທັນທີ ແລະ ແຈ້ງໃຫ້ທະນາ ຄານຊາບທັນທີຫາກພົບຂໍ້ຜິດພາດ ຫຼື ຄວາມບໍ່ຖືກຕ້ອງ. ຫາກທະນາຄານບໍ່ໄດ້ຮັບແຈ້ງເປັນລາຍລັກອັກສອນພາຍໃນຊາວເອັດ (21) ວັນລັດຖະການ ຕາມປະຕິທິນນັບຈາກວັນທີ e-Statement ກ່ຽວກັບຂໍ້ຜິດພາດ ຫຼື ຄວາມບໍ່ຖືກຕ້ອງໃນລາຍການຖອນເງິນ ຫຼື ລາຍການຝາກເງິນໃນ e-Statement, ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະຖືວ່າ ໄດ້ຍອມຮັບວ່າລາຍການທັງໝົດທີ່ສະແດງໃນ e-Statement ຈົນເຖິງວັນທີ່ຂອງລາຍການສຸດທ້າຍໃນ e-Statement ແລະ ຈະຖືວ່າເປັນຂໍ້ມູນທີ່ຖືກຕ້ອງ ແລະ ເປັນຂໍ້ສະຫລຸບ ຊຶ່ງລວມເຖິງການຖອນເງິນ ຫຼື ການຕັດເງິນອື່ນໆ ໃນບັນຊີຕາມລາຍການດັ່ງກ່າວ.

4.1.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະບໍ່ມີສິດໂຕ້ແຍ້ງລາຍການໃດໆໃນ e-Statement ຫຼັງຈາກຄົບກຳນົດໄລຍະເວລາຊາວເອັດ (21) ວັນລັດຖະການຕາມປະຕິທິນ. ຍົກເວັ້ນແຕ່ທະນາຄານຈະທຳການປັບປຸງລາຍການນຳເງິນເຂົ້າທີ່ຖືກບັນທຶກໄວ້ໃນບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໂດຍຄວາມຜິດພາດຄັ້ງນີ້ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງທີ່ຈະຄືນເງິນທີ່ເປັນລາຍການນຳເງິນເຂົ້າທີ່ບັນທຶກຜິດພາດໃນບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ແລະ ຈະຊົດເຊີຍຄວາມເສຍຫາຍຕ່າງໆທີ່ ທະນາຄານອາດຈະຕ້ອງໄດ້ຮັບອັນເນື່ອງມາຈາກການບັນທຶກການນຳເງິນເຂົ້າຜິດພາດ.

4.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດຂໍຮັບລາຍການບັນຊີໃນຮູບແບບເອກະສານໄດ້ດັ່ງນີ້:

4.2.1 ໃນກໍລະນີຂອງບັນຊີເງິນຝາກປະຢັດທີ່ມີບັດເດບິດ PB Lifestyle, ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດຂໍຮັບລາຍການບັນຊີໃນຮູບແບບເອກະສານທີ່ສົ່ງໄປຫາທີ່ຢູ່ທີ່ໄດ້ລົງທະບຽນໄວ້ຫຼ້າສຸດກັບທະນາຄານ ໂດຍຈະມີຄ່າທຳນຽມທີ່ທະນາຄານກຳນົດໄວ້.
4.2.2 ເຖິງຢ່າງໃດກໍ່ຕາມ ຈະບໍ່ມີເອກະສານລາຍການບັນຊີໃນກໍລະນີຂອງບັນຊີຝາກປະຫຍັດປະເພດ Statement Saving Account.
4.2.3 ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດຂໍຮັບລາຍການບັນຊີໃນຮູບແບບເອກະສານໂດຍກົງທີ່ເຄົາເຕີ້ບໍລິການຂອງທາງທະນາຄານ. ໂດຍຈະຕ້ອງຊຳລະຄ່າທຳນຽມຕາມທີ່ທະນາຄານໄດ້ກຳນົດ.

## 5. ດອກເບ້ຍ.

5.1 ດອກເບ້ຍ (ຖ້າມີ) ຈະຄິດໄລ່ຈາກຍອດຄົງເຫຼືອປະຈຳວັນໃນບັນຊີ ຕາມອັດຕາດອກເບ້ຍທີທະນາຄານກຳນົດໄວ້ໃນແຕ່ລະໄລຍະ ແລະ ດອກເບ້ຍ ຈະຖືກໂອນ ເຂົ້າບັນຊີໃນຊ່ວງເວລາທີ່ທະນາຄານກຳນົດ ຕາມດຸນພິນິດຂອງທະນາຄານ. ດອກເບ້ຍທີ່ຈ່າຍແມ່ນຂຶ້ນກັບ ພາສີຫັກຢູ່ບ່ອນຈ່າຍ, ອາກອນອື່ນໆ, ຄ່າທຳນຽມ ຫຼື ການຮຽກເກັບທີ່ອາດຈະຖືກບັງຄັບໂດຍອົງກອນທີ່ກ່ຽວຂ້ອງໃນຂະນະນັ້ນ.
5.2 ທະນາຄານອາດມີການປ່ຽນແປງອັດຕາດອກເບ້ຍຂອງບັນຊີນີ້ ໂດຍມີການແຈ້ງໃຫ້ຮັບຊາບຜ່ານຫນັງສືພິມທ້ອງຖິ່ນ ຫຼື ໂດຍການສະແດງອັດຕາດອກເບ້ຍທີ່ປັບໃໝ່ທີ່ທະນາຄານ ຫຼື ຢູ່ໃນເວັບໄຊທ໌ຂອງທະນາຄານ.

## 6. ຄວາມຮັບຜິດຊອບ.

6.1 ເມື່ອທະນາຄານຍອມຮັບ ຫຼື ຮັບຜິດຊອບໃນນາມຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼື ຕາມການຮ້ອງຂໍຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ. ເງິນ ຫຼື ຫຼັກຊັບ ແລະ ຂອງມີຄ່າອື່ນໆທີ່ຝາກໄວ້ກັບທະນາຄານທີ່ເປັນຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະກາຍເປັນຫຼັກຄ້ຳປະກັນໂດຍອັດຕະໂນມັດ. ທະນາຄານອາດຈະເກັບເງິນ, ຫຼັກຊັບ ຫຼື ວັດຖຸມີຄ່າດັ່ງກ່າວໄວ້ທັງໝົດ ຫຼື ພາກສ່ວນໃດພາກສ່ວນໜຶ່ງ ແລະ ມີສິດປະຕິເສດການຖອນເງິນດັ່ງກ່າວຈົນກວ່າພາລະຜູກພັນຈະໄດ້ຮັບການຊຳລະ.
6.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຍິນຍອມໃຫ້ທະນາຄານເປີດເຜີຍຂໍ້ມູນຕ່າງໆໃຫ້ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍເພື່ອປະຕິບັດຕາມຄຳສັ່ງ ຫລື ຂໍ້ກຳນົດຂອງ (ທຫລ).
6.3 ຖ້າທະນາຄານຈ້າງ ຫຼື ມີຄວາມຈຳເປັນຕ້ອງຈ້າງທະນາຍຄວາມເພື່ອບັງຄັບໃຊ້ສິດຕາມຂໍ້ຕົກລົງ ຫຼື ໃນກໍລະນີອື່ນບໍ່ວ່າຈະເປັນຂະບວນການທາງສານ ຫຼື ວິທີການອື່ນໆທີ່ກ່ຽວຂ້ອງກັບບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ. ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຈະຕ້ອງຮັບຜິດຊອບໃນການຊຳລະຕໍ່ຄ່າໃຊ້ຈ່າຍ, ຄ່າທຳນຽມ ແລະ ຄ່າບໍລິການທັງໝົດທີ່ກ່ຽວຂ້ອງ ແລະ ທະນາຄານມີສິດ ໃນການຫັກຄ່າໃຊ້ຈ່າຍດັ່ງກ່າວຈາກບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ.
6.4 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຕົກລົງເຫັນດີວ່າທະນາຄານຈະບໍ່ຮັບຜິດຊອບຕໍ່ການສູນເສຍ, ຄ່າໃຊ້ຈ່າຍ ແລະ ຄ່າເສຍຫາຍທັງໝົດທີ່ອາດຈະເກີດ ຂຶ້ນໂດຍບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼື ການດຳເນີນການຕາມຄຳສັ່ງຕ່າງໆຂອງທະນາຄານ ຫຼື ໃນກໍລະນີທີ່ບັນຊີທະນາຄານຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼື ພາກສ່ວນໃດຫນຶ່ງທີ່ຖືກຫຼຸດລົງ ຫຼື ຖືກອາຍັດໂດຍລັດຖະບານ ຫຼື ໜ່ວຍງານຕ່າງໆ.
6.5 ທະນາຄານຈະບໍ່ຮັບຜິດຊອບຕໍ່ການສູນເສຍ ຫຼື ຄວາມເສຍຫາຍໃດໆທີ່ເກີດຂຶ້ນກັບ ຂ້າພະເຈົ້າ/ພວກຂ້າພະເຈົ້າ ອັນເນື່ອງມາຈາກການປະຕິບັດຕາມ ຫຼື ການບໍ່ປະຕິບັດ ຕາມຄຳສັ່ງການຊຳລະເງິນທີ່ອອກໂດຍ ຂ້າພະເຈົ້າ/ພວກຂ້າພະເຈົ້າ ເຊິ່ງບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ ຫຼື ໃນກໍລະນີຍອດເງິນຝາກບໍ່ພຽງພໍທີ່ຈະກວມເອົາ ຄ່າ

ບໍລິການທະນາຄານ ແລະ ຈຳນວນທີ່ລະບຸໄວ້ໃນຄຳສັ່ງດັ່ງກ່າວ ຫຼື ໂດຍເຫດຜົນອື່ນໆ ຫຼື ເກີດຈາກທຸລະກິດ ຫຼື ການດຳເນີນງານທີ່ຖືກຂັດຂວາງ ຫຼື ແຊກແຊງ ໂດຍຄວາມລ່າຊ້າ, ການປອມແປງລາຍເຊັນຂອງຜູ້ລົງນາມ, ການປ່ຽນແປງ ແລະ/ຫຼື ການປອມແປງອັນເນື່ອງມາຈາກຄວາມລະເລີຍ, ປະໝາດ ຂອງຂ້າພະເຈົ້າ/ພວກຂ້າພະເຈົ້າ, ລວມເຖິງຄວາມຂັດແຍ້ງກັນ, ການຂັດຂ້ອງຂອງລະບົບໄຟຟ້າ ຫຼື ການສະໜອງພະລັງງານ ຫຼື ໂທລະຄົມມະນາຄົມ ຫຼື ລະບົບເຄືອຂ່າຍການສື່ ສານອື່ນໆ, ການຈາລະຈອນ, ການປິດລ້ອມ/ປິດກັ້ນ, ການປະທ້ວງ, ການຂັດຂວາງ ຫຼື ຄວາມລົ້ມເຫຼວຂອງເຄື່ອງຈັກ ຫຼື ອຸປະກອນ.

6.6 ໃນຂອບເຂດສູງສຸດທີ່ກົດໝາຍອະນຸຍາດ ແລະ ຖ້າບໍ່ແມ່ນຍ້ອນຄວາມປະໝາດເລີນເລີ້ລະເລີຍຂອງທະນາຄານຢ່າງຮ້າຍແຮງ ຫຼື ການກະທຳໂດຍເຈດຕະນາ ຂອງທະນາຄານ; ທະນາຄານຈະບໍ່ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍ, ການສູນເສຍ, ຄ່າບໍລິການ ແລະ/ຫຼື ຄວາມເສຍຫາຍໃດໆທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງອາດຈະໄດ້ຮັບ ຫຼື ປະສົບກັບຄວາມລົ້ມເຫຼວ, ການຂັດຂ້ອງ ຫຼື ຄວາມຜິດປົກກະຕິຂອງລະບົບ ຫຼື ພື້ນຖານໂຄງລ່າງທີ່ທະນາຄານນຳໃຊ້.

6.7 ການຊຳລະເງິນໃດໆທີ່ທະນາຄານໄດ້ດຳເນີນຕາມຄຳສັ່ງທີ່ລະບຸວ່າໄດ້ຮັບການລົງນາມໂດຍ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼື ຜູ້ຕາງຫນ້າທີ່ໄດ້ຮັບອະນຸຍາດຈາກ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະຖືວ່າເປັນການຊຳລະເງິນຢ່າງສົມບູນ ແລະ ທະນາຄານ ຈະບໍ່ມີຄວາມຮັບຜິດຊອບໃດໆຕໍ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ແລະ ຝ່າຍອື່ນໆ ທີ່ກ່ຽວຂ້ອງ.

## 7. ສິດໃນການຫັກບັນຊີ.

7.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງເຫັນດີທີ່ຈະຈ່າຍ ແລະ ອະນຸຍາດໃຫ້ທະນາຄານຫັກເງິນຈາກບັນຊີນີ້ສຳລັບໃບສັ່ງຈ່າຍ ທະນາບັດ ຄຳສັ່ງຊື້ເງິນ ຫຼື ເຄື່ອງມືທາງການເງິນອື່ນໆ ລວມເຖິງຄ່າທຳນຽມ/ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນເປັນຜົນມາຈາກສິ່ງດັ່ງກ່າວ ແລະ ຄ່າທຳນຽມ ຫຼື ຄ່າຄອມມິດຊັ່ນອື່ນໆ ຫຼື ສຳລັບການບໍລິການ ທີ່ກ່ຽວຂ້ອງ ຫຼື ຄ່າທຳນຽມ ແລະ ຄ່າບໍລິການທີ່ເໝາະສົມອື່ນໆ ທີ່ທະນາຄານກຳນົດ ແລະ ອະນຸມັດໂດຍ ທຫລ ຫຼື ພາສີທີ່ກ່ຽວຂ້ອງເຊິ່ງມີຜົນບັງຄັບໃຊ້ໃນ ຂະນະນີ້ ຫຼື ຈະຖືກຈັດຕັ້ງປະຕິບັດ ແລະ ຮຽກເກັບຕາມກົດໝາຍສຳລັບການບໍລິການ ແລະ ສິ່ງອຳນວຍຄວາມສະດວກໃຫ້ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

7.2 ໃນກໍລະນີທີ່ທະນາຄານໄດ້ຮັບແຈ້ງການວ່າເງິນໄດ້ຖືກຝາກ ຫຼື ໂອນເຂົ້າບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໂດຍຄວາມຜິດພາດ ຫຼື ໂດຍຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ເຮັດເຂົ້າໃຈຜິດ (ເງິນທີ່ບໍ່ໄດ້ຕັ້ງໃຈ) ທີ່ຜູ້ຈ່າຍເງິນເປັນຜູ້ໃຫ້ຂໍ້ມູນດັ່ງກ່າວ ທະນາຄານມີສິດທີ່ຈະລະງັບເງິນທີ່ບໍ່ເຈດຕະນາດັ່ງກ່າວນັ້ນທັນທີ ຂ້າພະເຈົ້າ/ພວກຂ້າພະເຈົ້າ ບໍ່ມີສິດນຳໃຊ້ເງິນໃດໆໃນບັນຊີທີ່ບໍ່ແມ່ນຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

7.2.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຮັບຮູ້ວ່າ ການດຳເນີນການທາງກົດໝາຍອາດຈະຖືກດຳເນີນຕໍ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໄດ້ຖ້າຫາກຖືກພົບເຫັນວ່າໄດ້ ສໍ້ໂກງເງິນທີ່ບໍ່ໄດ້ເຈດຕະນາຂອງຜູ້ຈ່າຍເງິນໂດຍບໍ່ສຸດຈະລິດ ຫຼື ຂ້າພະເຈົ້າ/ພວກຂ້າພະເຈົ້າ ຖືກພົບເຫັນວ່າມີສ່ວນຮ່ວມໃນທຸລະກຳການສໍ້ໂກງໃດໆ (e.g., ບັນຊີມ້າ).

7.2.2 ທະນາຄານຈະແຈ້ງໃຫ້ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຮັບຮູ້ເຖິງການຮຽກຮ້ອງສິດຂອງຜູ້ຈ່າຍເງິນໂດຍບໍ່ໄດ້ເຈດຕະນາ.

## 8. ສິດໃນການຫັກລົບບັນຊີ (Right of Set Off).

8.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງເຫັນດີວ່າ ນອກເໜືອຈາກສິດຍຶດຊັບທົ່ວໄປ ຫຼື ສິດທິທີ່ຄ້າຍຄືກັນອື່ນໆ ຊຶ່ງທະນາຄານໃນຖານະຜູ້ໃຫ້ບໍລິການທາງການເງິນອາດມີສິດຕາມກົດໝາຍ, ທະນາຄານອາດລວບລວມ, ສັງລວມບັນຊີທະນາຄານ ຂ້າພະເຈົ້າ/ພວກຂ້າພະເຈົ້າ ທັງໝົດ ຫຼື ບາງສ່ວນກັບໜີ້ສິນຕໍ່ທະນາຄານ ໂດຍແຈ້ງລ່ວງໜ້າເຈັດ (7) ວັນຕາມປະຕິທິນ ແລະ ຫັກລົບ ຫຼື ໂອນຈຳນວນເງິນຕ່າງໆໃນບັນຊີເງິນຝາກປະຫຍັດນີ້ໄດ້ ເພື່ອນຳໄປຊຳລະໜີ້ຕ່າງໆທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ມີຕໍ່ທະນາຄານບໍ່ວ່າໜີ້ດັ່ງກ່າວຈະເປັນໜີ້ປັດຈຸບັນອານາຄົດ ທີ່ອາດເກີດຂຶ້ນຈິງຕາມເງື່ອນໄຂຫລັກ ຫຼື ຫລັກປະກັນ ຫຼື ຫລາຍລາຍການ ຫຼື ຮ່ວມກັນ.

8.2 ໃນກໍລະນີທີ່ມີການລວມຍອດເງິນ ການຫັກລົບຍອດ ຫຼື ການໂອນນັ້ນຮຽກຮ້ອງໃຫ້ມີການປ່ຽນສະກຸນເງິນໜຶ່ງເປັນອີກສະກຸນໜຶ່ງ, ການປ່ຽນແປງດັ່ງກ່າວຈະຖືກຄິດໄລ່ຕາມອັດຕາແລກປ່ຽນຂອງທະນາຄານ (ຕາມທີ່ທາງທະນາຄານໄດ້ກຳນົດໄວ້) ສຳລັບການຊື້ເງິນຕາທີ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕ້ອງຮັບຜິດຊອບຕໍ່ສະກຸນເງິນທີ່ປ່ຽນແລ້ວທະນາຄານຈະບໍ່ຮັບຜິດຊອບຕໍ່ການສູນເສຍໃດໆ ທີ່ເກີດຈາກຜົນຂອງການໃຊ້ສິດຕາມສັນຍານີ້.

## 9. ການປິດບັນຊີ.

9.1 ທະນາຄານສາມາດປິດບັນຊີນີ້ດ້ວຍເຫດຜົນໃດກໍ່ຕາມ, ໂດຍບໍ່ມີພັນທະຜູກພັນທີ່ຈະຕ້ອງລະບຸເຫດຜົດໃດໆ ໂດຍແຈ້ງໃຫ້ຂ້າພະເຈົ້າຊາບພາຍໃນສິບສີ່ (14) ມື້. ທະນາຄານອາດຈະອອກແຊັກຂອງທະນາຄານສຳລັບຍອດຄົງເຫຼືອທັງຫມົດທີ່ມີຢູ່ໃນບັນຊີນີ້, ໂດຍຫັກລົບຄ່າໃຊ້ຈ່າຍໃນການຄຸ້ມຄອງ ຫຼື ຄ່າໃຊ້ຈ່າຍອື່ນໆທີ່ ເກີດຂຶ້ນ ແລະ ອາດຈະສົ່ງແຊັກດັ່ງກ່າວໄປຫາທີ່ຢູ່ຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ທີ່ລົງທະບຽນກັບທະນາຄານ.

## 10. ການລະງັບບັນຊີ.

10.1 ຄວາມສຳພັນຕາມສັນຍາລະຫວ່າງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ແລະ ທະນາຄານຈະຖືກຢຸດຕິ ແລະ ການດຳເນີນງານຂອງບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະຖືກລະງັບໃນກໍລະນີດັ່ງຕໍ່ໄປນີ້:

10.1.1 ການເສຍຊີວິດ, ເປັນບ້າ, ເສຍຈິດ ຫຼື ການລົ້ມລະລາຍ;

10.1.2 ຂະບວນການທາງດ້ານກົດຫມາຍ ຫຼື ຄຳສັ່ງໂດຍສານກ່ຽວຂ້ອງກັບບັນຊີທະນາຄານຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

**11. ບັນຊີຂອງຜູ້ເຍົາ (Minor’s Account).**

11.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຂໍຢືນຢັນ ແລະ ຕົກລົງເຫັນດີວ່າບັນຊີດັ່ງກ່າວ ບໍ່ແມ່ນບັນຊີທີ່ດຳເນີນທຸລະກຳໂດຍບຸກຄົນທີສາມ ແລະ ທັງບໍ່ແມ່ນບັນຊີຮ່ວມກັບຜູ້ເຍົາ ຂ້າພະເຈົ້າ/ພວກຂ້າພະເຈົ້າ ແມ່ນເປັນຜູ້ປົກຄອງ/ພໍ່ແມ່ຂອງຜູ້ເຍົາ ແລະ ຕົກລົງເຫັນດີ ແລະ ຍອມຮັບວ່າ ຂ້າພະເຈົ້າ/ພວກຂ້າພະເຈົ້າ ແມ່ນເປັນຜູ້ຝາກເງິນກັບທະນາຄານ.

11.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງເຫັນດີວ່າເມື່ອຜູ້ເຍົາມີອາຍຸຄົບສິບແປດ (18) ປີ, ຂ້າພະເຈົ້າ/ພວກຂ້າພະເຈົ້າ, ພ້ອມດ້ວຍຜູ້ເຍົາ ຈະຕ້ອງຮ່ວມກັນ ຂຽນໜັງສືສະເໜີຫາທະນາຄານໃໝ່ ແລະ ຈະຕຽມໜັງສືມອບສິດສຳຫຼັບການດຳເນີນງານຂອງບັນຊີໃຫ້ແກ່ທະນາຄານ. ຈົນກ່ວາທະນາຄານຈະໄດ້ຮັບໜັງສືສະເໜີມອບ ຫມາຍສະບັບໃໝ່, ໜັງສືມອບອຳນາດສະບັບເກົ່າຈະຍັງຄົງມີຜົນບັງຄັບໃຊ້.

11.3 ໃນກໍລະນີ ຂ້າພະເຈົ້າ/ພວກຂ້າພະເຈົ້າ ເສຍຊີວິດກ່ອນທີ່ຜູ້ເຍົາຈະມີອາຍຸສິບແປດ (18) ປີ, ບັນຊີຈະຖືກລະງັບການດຳເນີນງານ ແລະ ເລື່ອງກ່ຽວຂ້ອງກັບບັນຊີຈະຖືກສົ່ງຕໍ່ໃຫ້ກັບຜູ້ຈັດການມໍລະດົກ/ຜູ້ບໍລິຫານມໍລະດົກຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕາມທີທະນາຄານເຫັນສົມຄວນ. ທະນາຄານຂໍສະຫງວນສິດໃນການດຳເນີນການຕາມຄຳແນະນຳຂອງທີ່ປຶກສາດ້ານກົດຫມາຍຂອງທະນາຄານ ແລະ ຄ່າໃຊ້ຈ່າຍ, ຄ່າທຳນຽມກ່ຽວຂ້ອງທີ່ເກີດຂຶ້ນຈະຖືກຫັກຈາກບັນຊີຂອງຂ້າພະເຈົ້າ.

**12. ບັນຊີຮ່ວມ.**

12.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຜູ້ຖືບັນຊີຮ່ວມຕົກລົງເຫັນດີວ່າໃນກໍລະນີ ຫາກຜູ້ຖືບັນຊີຝ່າຍໃດຝ່າຍໜຶ່ງເກີດເສຍຊີວິດ, ທະນາຄານມີອຳນາດຊຳລະຍອດເງິນຄົງ ເຫຼືອຂອງບັນຊີນີ້ ໃຫ້ແກ່ຜູ້ທີ່ຍັງມີຊີວິດຢູ່ ແລະ ການຈ່າຍເງິນດັ່ງກ່າວ ຈະຖືວ່າເປັນການປິດຍອດເງິນທີ່ຖືກຕ້ອງໂດຍສົມບູນຂອງທະນາຄານ. ສຳລັບຈຳນວນເງິນຄົງຄ້າງຢູ່ໃນບັນຊີ.

ພວກຂ້າພະເຈົ້າໄດ້ຕົກລົງ ແລະ ເຫັນດີເປັນເອກະສັນທີ່ຈະໃຫ້ການຊົດເຊີຍຄ່າເສຍຫາຍຕໍ່ທະນາຄານ ຈາກການດຳເນີນຄະດີ, ການຮ້ອງຟ້ອງ, ການຮຽກຮ້ອງ, ຄວາມເສຍຫາຍ, ການລົງໂທດ, ຄ່າໃຊ້ຈ່າຍ, ຄ່າທຳນຽມ ແລະ ລາຍຈ່າຍຕ່າງໆ ທີ່ເກີດຂຶ້ນກັບທະນາຄານ ຫຼື ອັນເປັນຜົນຈາກການຈ່າຍຍອດເງິນຄົງເຫຼືອໃນບັນຊີໃຫ້ແກ່ຜູ້ຖືບັນຊີທີ່ຍັງມີຊີວິດຢູ່.

12.2 ພວກຂ້າພະເຈົ້າຕົກລົງເຫັນດີກັບວິທີການດຳເນີນບັນຊີຕາມທີ່ໄດ້ລະບຸກໄວ້ໃນແບບຟອມການເປີດບັນຊີທີ່ທະນາຄານກຳນົດ ຊຶ່ງເຮົາຈັດທຳຂຶ້ນ ນອກຈາກນີ້ ພວກຂ້າພະເຈົ້າຍັງຕົກລົງ ແລະ ຮັບຊາບວ່າຄຳສັ່ງທີ່ໃຫ້ໄວ້ກ່ຽວກັບການດຳເນີນງານບັນຊີນີ້ສາມາດຍົກເລີກໄດ້ໂດຍເຮົາຄົນໃດຄົນໜຶ່ງ ແລະ ທະນາຄານມີສິດທີ່ ຈະດຳເນີນຕາມຄຳສັ່ງນັ້ນ.

12.3 ພວກຂ້າພະເຈົ້າຜູ້ຖືບັນຊີ ຕົກລົງເຫັນດີ ແລະ ອະນຸຍາດທະນາຄານດັ່ງນີ້:

12.3.1 ການໂອນເງິນເຂົ້າບັນຊີຮ່ວມ ບໍ່ວ່າຈະເປັນເງິນສົດ ຫຼື ການໂອນຜ່ານທາງອີເລັກໂທຣນິກ, ແຊັກ ແລະ ເຄື່ອງມືທາງການເງິນອື່ນໆ ຫຼື ຊຳລະໃຫ້ແກ່ພວກເຮົາ/ຜູ້ໃດຜູ້ໜຶ່ງ. ໂດຍຄຳນຶ່ງເຖິງສິ່ງທີ່ກ່າວມາຂ້າງເທິງນີ້ ແລະ ທະນາຄານຕົກລົງທີ່ຈະໂອນເງິນທັງໝົດທີ່ທະນາຄານໄດ້ຮັບ ບໍ່ວ່າຈະເປັນເງິນສົດ ຫຼື ຜ່ານການໂອນເງິນທາງອີເລັກໂທຣນິກ ຫຼື ຈາກແຊັກ ແລະ ເຄື່ອງມືທາງການເງິນອື່ນໆທີ່ອຳນວຍຄວາມສະດວກໃຫ້ແກ່ ພວກຂ້າພະເຈົ້າ ຄົນໃດຄົນໜຶ່ງທີ່ລົງນາມໃນບັນຊີຮ່ວມ ແລະ ສົ່ງມອບເອກະສານ ຫຼື ແຊັກຕ່າງໆທີ່ທະນາຄານ ອາດຖືໄວ້ ໃນບັນຊີຮ່ວມໃຫ້ແກ່ຜູ້ຖືຄົນໃດຄົນໜຶ່ງຂອງພວກຂ້າພະເຈົ້າ; ແລະ

12.3.2 ທະນາຄານຕົກລົງຮັບການແຈ້ງການເປັນລາຍລັກອັກສອນ, ໃນຮູບແບບທີ່ທະນາຄານຍອມຮັບໄດ້, ຊຶ່ງໄດ້ລົງນາມ ແລະ ຢັ້ງຢືນໂດຍ ພວກຂ້າພະເຈົ້າທຸກຄົນເພື່ອສະແດງຈຸດປະສົງໃນການທີ່ຈະປິດບັນຊີຮ່ວມ. ໃນກໍລະນີທີ່ ພວກຂ້າພະເຈົ້າບໍ່ສາມາດມາດຳເນີນທຸລະກຳພ້ອມກັນໄດ້ທີ່ທະນາຄານ. ພວກຂ້າພະເຈົ້າຕົກລົງ ເຫັນດີວ່າ ທະນາຄານສາມາດປິດບັນຊີຮ່ວມນີ້ໄດ້ ເມື່ອໄດ້ຮັບຫນັງສືແຈ້ງດັ່ງກ່າວເປັນລາຍລັກອັກສອນຈາກ ບຸກຄົນໃດບຸກຄົນໜຶ່ງ ທີ່ຢືນຕໍ່ທະນາຄານດ້ວຍຕົນເອງ. ພວກຂ້າພະເຈົ້າຍັງຕົກລົງເຫັນດີ ແລະ ຍອມຮັບເພີ່ມເຕີມວ່າຄຳສັ່ງໃດໆທີ່ເຮົາສົ່ງເຖິງທະນາຄານເພື່ອທີ່ຈະປິດ ບັນຊີຮ່ວມໃນຮູບແບບການສື່ສານທາງວາຈາ ຫຼື ທາງໂທລະສັບ, ແຟັກ ຫຼື ອີເມລທາງອິນເຕີເນັດ ແມ່ນທະນາຄານຈະບໍ່ສາມາດຍອມຮັບຄຳສັ່ງດັ່ງກ່າວໄດ້.

ພວກຂ້າພະເຈົ້າ ຂໍຮັບຮອງ ແລະ ຕົກລົງຮ່ວມກັນ ແລະ ແຍກກັນຊົດເຊີຍຄ່າເສຍຫາຍ ແລະ ຈະປົກປ້ອງທະນາຄານຈາກການສູນເສຍ ແລະ ຊົດເຊີຍຄວາມເສຍຫາຍທີ່ອາດຈະເກີດຂຶ້ນແກ່ທະນາຄານລວມເຖິງ ການຮຽກຮ້ອງ, ການຮ້ອງຟ້ອງ, ການດຳເນີນຄະດີ, ການດຳເນີນການ, ຄວາມ ເສຍຫາຍ, ຄ່າໃຊ້ຈ່າຍ, ຄ່າທຳນຽມ ແລະ ພາລະຜູກພັນອື່ນໆທີ່ເກີດຂຶ້ນ ຫຼື ເປັນຜົນເກີດຈາກການອະນຸຍາດຂອງພວກເຮົາຂ້າງເທິງ, ນອກນີ້ທະນາຄານ ມີສິດໃນການປະຕິເສດການຮັບເງິນສົດ, ການໂອນເງິນທາງອີເລັກໂທຣນິກ, ແຊັກ ຫຼື ເຄື່ອງມືທາງດ້ານການເງິນອື່ນໆໄດ້ທຸກເວລາ ແລະ ດ້ວຍເຫດຜົນໃດໆ ຫຼື ເປັນຜົນມາຈາກທະນາຄານປະຕິເສດ ຫຼື ດຳເນີນການຕາມຄຳສັ່ງຂອງພວກເຮົາໃນການປິດບັນຊີຮ່ວມ ແລະ ຈ່າຍຍອດຄົງເຫຼືອຢູ່ໃນ ບັນຊີຮ່ວມ ຕາມຄຳສັ່ງຂອງພວກຂ້າພະເຈົ້າ.

**13. ບັນຊີທີ່ບໍ່ແມ່ນສັນຊາດລາວ (External Account).**

13.1 ບັນຊີທີ່ບໍ່ແມ່ນສັນຊາດລາວ ສາມາດເປີດໄດ້ໂດຍຜູ້ທີ່ບໍ່ມີຖິ່ນຖານ ຫຼື ພູມລຳເນົາໃນປະເທດລາວ (ເຊັ່ນ: ບຸກຄົນ, ບໍລິສັດ, ສະຖາບັນ ຫຼື ບໍລິສັດທີ່ບໍ່ແມ່ນຂອງຄົນລາວ).

13.2 ບຸກຄົນທີ່ບໍ່ມີຖິ່ນຖານ ຫຼື ພູມລຳເນົາແມ່ນບໍ່ໄດ້ຮັບອະນຸຍາດໃຫ້ມີບັນຊີທົ່ວໄປໄດ້.

13.3 ແຫຼ່ງທີ່ມາ ແລະ ການໃຊ້ເງິນໃນບັນຊີທີ່ບໍ່ແມ່ນສັນຊາດລາວແມ່ນຢູ່ພາຍໃຕ້ກົດລະບຽບຂອງທະນາຄານແຫ່ງ ສປປ ລາວ (ທຫລ).

**14. ກາປະທັບ.**

14.1 ການພິມກາປະທັບຂອງບໍລິສັດ/ອົງກອນ/ຊົມລົມ/ສະໂມສອນ/ສະມາຄົມ ຕ້ອງໄດ້ຕິດຢູ່ໃນແບບຟອມການເປີດບັນຊີທີ່ກຳນົດໂດຍ ທະນາຄານພ້ອມດ້ວຍລາຍ ເຊັນຂອງບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການເປີດບັນຊີ.

**15. ບັນຊີທີ່ບໍ່ມີການເຄື່ອນໄຫວ.**

15.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ຜູ້ຕາງໜ້າຂອງອົງການຈັດຕັ້ງ ຮັບຮູ້ເຖິງຂໍ້ກຳນົດຂອງມາດຕາ 5 ເຖິງ 10 ຂອງຂໍ້ຕົກລົງວ່າດ້ວຍ ບັນຊີທີ່ບໍ່ມີການເຄື່ອນໄຫວ, ທະນາຄານ ແຫ່ງ ສປປ ລາວ ຕາມແຈ້ງການເລກທີ 1190/ທຫລ, ລົງວັນທີ 30 ທັນວາ 2019. ໃນນີ້ບັນຊີເງິນຝາກຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະຖືກຈັດປະເພດເປັນບັນຊີທີ່ບໍ່ມີການເຄື່ອນໄຫວເປັນເວລາຫົກ (6) ປີ, ນັບຈາກວັນທີດຳເນີນການເຮັດທຸລະກຳຄັ້ງສຸດທ້າຍ ແລະ ເງິນໃນບັນຊີແມ່ນ ຈະຕ້ອງ ໂອນໄປທະນາຄານ ແຫ່ງ ສປປ ລາວ.

15.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ຜູ້ຕາງໜ້າຂອງອົງການຈັດຕັ້ງ ຕົກລົງທີ່ຈະມາທະນາຄານດ້ວຍຕົນເອງກ່ອນທີ່ ບັນຊີຈະຖືກຈັດເປັນບັນຊີທີ່ບໍ່ມີການເຄື່ອນໄຫວ ຫົກ (6) ປີ ດັ່ງທີ່ໄດ້ກ່າວມາຂ້າງເທິງເພື່ອເຮັດທຸລະກຳການ ຖອນເງິນ ຫຼື ຝາກເງິນ ເພື່ອໃຫ້ບັນຊີມີການເຄື່ອນໄຫວ. ໃນການພິຈາລະນາຂອງທະນາຄານໄດ້ຕົກລົງເຫັນດີກັບຄຳຮ້ອງສະໝັກຂ້າງເທິງນີ້ຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ, ຂ້າພະເຈົ້າ/ພວກຂ້າພະເຈົ້າ/ຜູ້ຕາງໜ້າຂອງອົງການຈັດຕັ້ງໄດ້ຕົກລົງເຫັນດີ ແລະ ຮັບຮອງວ່າຈະບໍ່ຮຽກຮ້ອງຄວາມເສຍຫາຍໃດໆຕໍ່ທະນາຄານ ແລະ ຈະຊົດເຊີຍຄ່າເສຍຫາຍທີ່ອາດຈະເກີດຂຶ້ນຈາກການຊັກຊ້າ/ການລະເວັ້ນ/ຄວາມຜິດພາດໃນການດຳເນີນການຕາມຄຳສັ່ງດັ່ງກ່າວ.

15.3 ຫາກຂ້າພະເຈົ້າ/ພວກຂ້າພະເຈົ້າ/ຜູ້ຕາງໜ້າຂອງອົງການຈັດຕັ້ງ ບໍ່ໄດ້ດຳເນີນການເຄື່ອນໄຫວບັນຊີເປັນເວລາດົນ, ຂ້າພະເຈົ້າ/ພວກຂ້າພະເຈົ້າ ຮັບຊາບວ່າທະນາຄານ ຈະແຈ້ງລ່ວງໜ້າສິບສີ່ (14) ວັນ ກ່ອນທີ່ຈະດຳເນີນການໂອນເງິນໃນບັນຊີໄປໃຫ້ ທະນາຄານແຫ່ງ ສປປ ລາວ.

**16. ກົດໝາຍວ່າດ້ວຍພາສີບັນຊີຕ່າງປະເທດ (FATCA).**

16.1 ທະນາຄານ ພາບລິກ ລາວ ຈຳກັດ, ຮ່ວມກັບບໍລິສັດແມ່ Public Bank Berhad, ບໍລິສັດຍ່ອຍ ແລະ ສາຂາ ຂອງທະນາຄານ ພາບລິກ ("PBB Group") ແມ່ນສະຖາບັນການເງິນຕ່າງປະເທດທີ່ເຂົ້າຮ່ວມພາຍໃຕ້ກົດໝາຍວ່າດ້ວຍພາສີບັນຊີຕ່າງປະເທດ ("FATCA") ຂອງສະຫະລັດອາເມຣິກາ ("U.S."). FATCA ຮຽກຮ້ອງໃຫ້ມີການດຳເນີນການກວດສອບລູກຄ້າຜູ້ຖືບັນຊີຂອງ ທະນາຄານ ພາບລິກ ລາວ ຈຳກັດ ຢ່າງລະອຽດ ເພື່ອໃຫ້ສາມາດລະບຸຕົວຕົນ ແລະ ລາຍງານບຸກຄົນທີ່ມີສະຖານະເປັນບຸກຄົນຂອງສະຫະລັດ ແລະ ຜູ້ຖືຫຸ້ນລາຍໃຫຍ່ທີ່ເປັນບຸກຄົນຂອງສະຫະລັດ, ໃນກໍລະນີການຂອງຕ່າງຊາດ ໃຫ້ແກ່ໜ່ວຍ ງານທີ່ມີອຳນາດໃນລາວ** ແລະ ໃນທີ່ສຸດຈະສົ່ງຂໍ້ມູນໃຫ້ກັບກົມພາສີອາກອນຂອງສະຫະລັດ ("IRS"). ຕາມຂໍ້ຕົກລົງລະຫວ່າງລັດຖະບານ ("IGA") ລະຫວ່າງ ສປປ ລາວ ແລະ ສະຫະລັດ. ໜ່ວຍງານທີ່ມີອຳນາດຂອງລາວ (Lao Competent Authority) ເຊິ່ງໄດ້ຮັບການແຕ່ງຕັ້ງໂດຍ ລັດທະບານລາວ ເປັນໜ່ວຍງານກຳກັບດູແລເພື່ອບັງຄັບໃຫ້ບັງຄັບໃຊ້ ຂອງ FATCA ທີ່ກ່ຽວຂ້ອງກັບກົດໝາຍພາສີຂອງສະຫະລັດ ທີ່ບັງຄັບໃຊ້ກັບສະຖາບັນການເງິນພາຍໃນປະເທດ.

(**ອົງການຈັດຕັ້ງທີ່ມີອຳນາດການປົກຄອງລາວທີ່ ລັດຖະບານລາວ ແຕ່ງຕັ້ງເປັນອົງກອນກວດກາການປະຕິບັດຂໍ້ກຳນົດ FATCA ຂອງກົດໝາຍວ່າດ້ວຍພາສີຂອງສະຫະລັດທີ່ຄຸ້ມຄອງສະຖາບັນການເງິນພາຍໃນປະເທດ.)

16.2 ໃນບາງກໍລະນີ ທະນາຄານ ພາບລິກ ລາວ ຈຳກັດ ຈະຮ້ອງຂໍເອົາຂໍ້ມູນບາງຢ່າງທີ່ສົ່ງໂດຍລູກຄ້າ/ຜູ້ຖືບັນຊີສົ່ງຂໍ້ມູນບາງສ່ວນເພື່ອ ປະຕິບັດຕາມພັນທະ FATCA ຫາກລູກຄ້າ/ຜູ້ຖືບັນຊີບໍ່ສະໜອງຂໍ້ມູນດັ່ງກ່າວຈະສົ່ງຜົນໃຫ້ມີການລາຍງານຂໍ້ມູນລູກຄ້າ/ຜູ້ຖືບັນຊີຕໍ່ ອົງການຈັດຕັ້ງເຈົ້າໜ້າທີ່ລາວ ແລະ ອາດຈະສົ່ງຜົນ ໃຫ້ມີ ການຫັກພາສີ ຢູ່ບ່ອນຈ່າຍ 30% ໃນການຈ່າຍເງິນ ສະເພາະຂອງແຫຼ່ງລາຍຮັບ ຂອງສະຫະລັດ, ຫາກມີການຊຳລະເງິນໃຫ້ກັບລູກຄ້າ/ຜູ້ຖືບັນຊີຂອງ ທະນາຄານ ພາບລິກ ລາວ ຈຳກັດ. ໂດຍທົ່ວໄປຈະບໍ່ຖືກຫັກເງິນ ໂດຍໃຫ້ໃບຢັ້ງຢືນ ຫຼື ເອກະສານອື່ນໆ ກ່ຽວກັບສະຖານະຂອງລູກຄ້າແກ່ ທະນາຄານ ພາບລິກ ລາວ ຈຳກັດ. ຕາມທີ່ໄດ້ຮັບຄຳສັ່ງເພື່ອ ຮັບປະກັນວ່າຂໍ້ມູນຂອງລູກຄ້າ/ຜູ້ຖືບັນຊີຖືກຕ້ອງ, ທະນາຄານ ພາບລິກ ລາວ ຈຳກັດ ຈຶ່ງກຳນົດໃຫ້ລູກຄ້າ/ຜູ້ຖືບັນຊີແຈ້ງການປ່ຽນແປງຂໍ້ມູນລູກຄ້າລວມທັງການປ່ຽນທີ່ຢູ່ອາໄສ, ທີ່ຢູ່ທາງໄປສະນີ, ເບີໂທລະສັບ ແລະ ສັນຊາດ.

16.3 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ບຸກຄົນ/ຜູ້ຕາງໜ້າຂອງອົງການຈັດຕັ້ງ ຂໍຢືນຢັນ ແລະ ຮັບຮອງວ່າຂໍ້ມູນທັງໝົດທີ່ສະໜອງໃຫ້ກ່ຽວກັບຜູ້ຖືຫຸ້ນຢູ່ ໃນແບບຟອມ ນີ້ ເປັນຄວາມຈິງ ແລະ ຖືກຕ້ອງທຸກປະການ.

**17. ບັດເດບິດ PBLL Lifestyle (ຜູ້ສະໝັກສ່ວນບຸກຄົນເທົ່ານັ້ນ).**

17.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຢັ້ງຢືນວ່າຂໍ້ມູນທັງໝົດທີ່ໄດ້ໃຫ້ໄວ້ນັ້ນເປັນຄວາມຈິງ ແລະ ຄົບຖ້ວນ ແລະ ອະນຸຍາດໃຫ້ທະນາຄານກວດສອບຈາກແຫຼ່ງຂໍ້ມູນໃດໆກໍ່ຕາມທີ່ທະນາຄານເຫັນວ່າເໝາະສົມ ລວມທັງ LCIC ແລະ ຍັງຂໍເອົາຂໍ້ມູນສິນເຊື່ອທີ່ກ່ຽວຂ້ອງກັບການສະໝັກ ຂອງຂ້າພະເຈົ້າ/ພວກຂ້າພະເຈົ້າ ຈາກແຫຼ່ງໃດກໍ່ຕາມ ແລະ ໂດຍທາງໃດກໍ່ໄດ້. ຂ້າພະເຈົ້າ/ພວກຂ້າພະເຈົ້າ ຮັບຮູ້ວ່າບັດນີ້ສາມາດໃຊ້ງານໄດ້ຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາສະມາຊິກບັດເດບິດ PBLL Lifestyle ແລະ ຕົກລົງທີ່ຈະຜູກມັດຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງບັດ. ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງທີ່ຈະຊຳລະຄ່າທຳນຽມປະຈຳປີຕາມທີ່ກຳນົດ ເມື່ອໄດ້ຮັບການອະນຸມັດ ແລະ ຍອມຮັບພາລະໜີ້ສິນ ແລະ/ຫຼື ຫຼາຍຄົນສຳລັບຄ່າໃຊ້ຈ່າຍທັງໝົດໃນບັນຊີບັດ ຂອງຂ້າພະເຈົ້າ/ພວກຂ້າພະເຈົ້າ ກັບທະນາຄານ. ທະນາຄານອາດຈະອະນຸມັດ ຫຼື ປະຕິເສດການສະໝັກຂອງຂ້າພະເຈົ້າ/ພວກຂ້າພະເຈົ້າ ໂດຍບໍ່ຕ້ອງໃຫ້ເຫດຜົນໃດໆ.

17.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຂໍຢັ້ງຢືນ ແລະ ຮັບຮູ້ວ່າ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໄດ້ອ່ານ ແລະ ເຂົ້າໃຈຂໍ້ກຳນົດ ແລະ ເງື່ອນໄຂຂອງບັດເດບິດ PBLL Lifestyle ແລ້ວ ແລະ ຕົກລົງເຫັນດີວ່າ ຂໍ້ກຳນົດ ແລະ ເງື່ອນໄຂຂອງບັດເດບິດ PBLL Lifestyle ມີຜົນບັງຄັບໃຊ້ກັບ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

17.3 ໃນກໍລະນີທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕ້ອງການປິດ ຫຼື ມີການປ່ຽນແປງໃນຮູບແບບອື່ນ, ຂ້າພະເຈົ້າ/ພວກຂ້າພະເຈົ້າ ຂໍຮັບຮອງວ່າຈະແຈ້ງມາຍັງ ທະນາຄານທັນທີ ແລະ ຈະສົ່ງຄືນບັດເດບິດ PBLL Lifestyle ໃຫ້ກັບສາຂາທີ່ອອກບັດ ຂອງທະນາຄານ ເພື່ອຍົກເລີກ/ຢຸດຕິການໃຊ້ງານໃນທັນທີ.

17.4 ໃນກໍລະນີທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ບໍ່ໄດ້ແຈ້ງທະນາຄານກ່ຽວກັບການປ່ຽນແປງຮູບແບບໃດໆ ໃນການດໍາເນີນການຂອງບັນຊີ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະຖືວ່າທະນາຄານບໍ່ມີສ່ວນຮັບຜິດຊອບຕໍ່ການສູນເສຍ ຫຼື ຄວາມເສຍຫາຍຕ່າງໆທີ່ເກີດຂຶ້ນຈາກ ຂ້າພະເຈົ້າ/ພວກຂ້າພະເຈົ້າ. ຂ້າພະເຈົ້າ/ພວກຂ້າພະເຈົ້າ ຂໍຮັບຮອງວ່າຈະຊົດໃຊ້ຄ່າເສຍຫາຍໃຫ້ແກ່ທະນາຄານ (ລວມເຖິງຜູ້ສືບທອດ ແລະ ຜູ້ມອບໝາຍ) ຢ່າງເຕັມສ່ວນ ແລະ ຮັບຜິດຊອບຕໍ່ຄ່າເສຍຫາຍທັງໝົດທີ່ກ່ຽວຂ້ອງ ລວມເຖິງການດໍາເນີນການທາງກົດໝາຍ ຄ່າໃຊ້ຈ່າຍອື່ນໆ ທີ່ອາດຈະເກີດຂຶ້ນຕໍ່ກັບທະນາຄານ.

**18. ແຈ້ງການກ່ຽວກັບການນໍາໃຊ້ບັດເດບິດ PBLL Lifestyle.**

18.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງເຫັນດີວ່າເມື່ອ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໃຊ້ບັດເດບິດ PBLL Lifestyle ທີ່ຮ້ານຄ້າ, ຈໍານວນເງິນທີ່ທຽບເທົ່າກັບຍອດລວມຂອງການເຮັດທຸລະກໍາ ຈະຖືກກັກໄວ້ ຈາກບັນຊີເງິນຝາກປະຢັດ ຂອງຂ້າພະເຈົ້າ/ພວກຂ້າພະເຈົ້າ ຈົນກວ່າທະນາຄານຈະດໍາເນີນການຫັກບັນຊີທຸລະກໍາເຫຼົ່ານີ້ສໍາເລັດ.

18.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຮັບປະກັນວ່າ ຈໍານວນເງິນທີ່ມີຢູ່ໃນບັນຊີຝາກປະຢັດ ຂອງຂ້າພະເຈົ້າ/ພວກຂ້າພະເຈົ້າ ແມ່ນພຽງພໍໃນການຊໍາລະຄ່າໃຊ້ຈ່າຍ ໃນການຊື້ສິນຄ້າດ້ວຍບັດເດບິດ PBLL Lifestyle ຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

18.3 ວົງເງິນເລີ່ມຕົ້ນໃນການຊື້ສິນຄ້າຕໍ່ມື້ ຈະຖືກກໍານົດໂດຍທະນາຄານ, ຢ່າງໃດກໍ່ຕາມ, ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດປັບປ່ຽນວົງເງິນການຊື້ສິນຄ້າໄດ້ທີ່ສາຂາຂອງທະນາຄານ, ໂດຍຢູ່ພາຍໃຕ້ວົງເງິນສູງສຸດທີ່ທະນາຄານກໍານົດໄວ້ໃນແຕ່ລະໄລຍະ.

18.4 ວົງເງິນການຖອນເງິນສົດຕໍ່ມື້ ຈາກຕູ້ເອທີເອັມ ຈະຖືກໍານົດໂດຍທະນາຄານ, ຢ່າງໃດກໍ່ຕາມ, ຂ້າພະເຈົ້າ/ພວກຂ້າພະເຈົ້າ ສາມາດປັບປ່ຽນວົງເງິນການຖອນເງິນສົດໄດ້ທີ່ສາຂາຂອງທະນາຄານ, ໂດຍຢູ່ພາຍໃຕ້ວົງເງິນສູງສຸດທີ່ທະນາຄານກໍານົດໄວ້ໃນແຕ່ລະໄລຍະ.

**19. ບໍລິການ Pbe.**

19.1 ບຸກຄົນທີ່ມີອາຍຸ ສິບແປດ (18) ປີຂຶ້ນໄປຈະໄດ້ຮັບການໃຫ້ບໍລິການ PBe ຂອງທະນາຄານ ໂດຍຢູ່ພາຍໃຕ້ເງື່ອນໄຂທີ່ທະນາຄານກໍານົດ ແລະ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຍອມຮັບ ໃນຂໍ້ກໍານົດ ແລະ ເງື່ອນໄຂທີ່ກ່ຽວຂ້ອງກັບການທະນາຄານອອນໄລ ແລະ ການທະນາຄານຜ່ານມືຖືຂອງ ທະນາຄານ ພາບລິກ ລາວ ຈໍາກັດ.

19.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຕົກລົງເຫັນດີວ່າ ການເຂົ້າເຖິງ ແລະ ການຍົກເລີກບໍລິການ PBe ຈະຢູ່ພາຍໃຕ້ຂໍ້ກໍານົດ ແລະ ເງື່ອນໄຂທີ່ກ່ຽວຂ້ອງກັບ ການທະນາຄານອອນໄລ ແລະ ການທະນາຄານຜ່ານມືຖື ຂອງທະນາຄານ ພາບລິກ ລາວ ຈໍາກັດ ເຊິ່ງສາມາດເຂົ້າເບິ່ງໄດ້ທີ່ເວັບໄຊທ໌ຂອງທະນາຄານ.

**20. ແຈ້ງການ ແລະ ການສື່ສານ.**

20.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະແຈ້ງໃຫ້ທະນາຄານຮັບຊາບຫາກມີການປ່ຽນແປງທີ່ຢູ່ຕ່າງໆຂອງ ພວກຂ້າພະເຈົ້າ. ການຕິດຕໍ່ສື່ສານທັງໝົດທີ່ທະນາຄານສົ່ງໄປຍັງທີ່ຢູ່ລ່າສຸດ ທີ່ລົງທະບຽນໄວ້ກັບທະນາຄານຈະຖືວ່າໄດ້ຖືກສົ່ງໃຫ້ ຂ້າພະເຈົ້າ/ພວກຂ້າພະເຈົ້າ ເປັນທີ່ຮຽບຮ້ອຍ.

20.2 ແຈ້ງການເຕືອນ ແລະ ການຕິດຕໍ່ສື່ສານທັງໝົດຫາ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະເປັນລາຍລັກອັກສອນ ແລະ ອາດຈະຖືກສົ່ງຫາ ຂ້າພະເຈົ້າ/ ພວກຂ້າພະເຈົ້າ ຜ່ານທາງ ອີເມລ ຫຼື ສະແດງໄວ້ທີ່ສໍານັກງານ ແລະ ເວັບໄຊທ໌ຂອງທະນາຄານ. ຂະບວນການທາງກົດໝາຍທັງໝົດ ອາດຈະຖືກສົ່ງໄປຫາ ຂ້າພະເຈົ້າ/ພວກຂ້າພະເຈົ້າທາງໄປສະນີ ຫຼື ຝາກໄວ້ທີ່ຢູ່ລ່າສຸດຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ທີ່ລົງທະບຽນໄວ້ຫຼ້າສຸດ ກັບທະນາຄານ ແລະ ຈະຖືວ່າຖືກສົ່ງ ແລະ ຮັບໂດຍ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

20.3 ທະນາຄານອາດຈະເກັບ ຫຼື ປ່ຽນແປງຄ່າທໍານຽມ ແລະ ຄ່າບໍລິການຕ່າງໆໂດຍຈະມີການແຈ້ງການກ່ອນຊາວເອັດ (21) ວັນລັດຖະການຕາມປະຕິທິນ ໂດຍຜ່ານການສະແດງຄ່າທໍານຽມ ແລະ ຄ່າບໍລິການໃໝ່ຢູ່ທີ່ສະຖານທີ່ ແລະ ເວັບໄຊຂອງທະນາຄານ.

**21. ຄໍາແຈ້ງການ.**

21.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ບຸກຄົນ/ຜູ້ຕາງໜ້າຂອງອົງການຈັດຕັ້ງ ຈະຕ້ອງໄດ້ຕື່ມແບບຟອມ ແລະ ລົງນາມໃນແບບຟອມການເປີດບັນຊີ ທີ່ທະນາຄານກໍາ ນົດໄວ້ຂອງທະນາຄານ ເຊິ່ງຈະເປັນສ່ວນໜຶ່ງຂອງ ຂໍ້ກໍານົດ ແລະ ເງື່ອນໄຂນີ້.

**22. ນະໂຍບາຍຕ້ານການໃຫ້ສິນບົນ ແລະ ຕ້ານການສໍ້ລາດບັງຫຼວງຂອງທະນາຄານ.**

22.1 ທະນາຄານໄດ້ຈັດຕັ້ງປະຕິບັດນະໂຍບາຍຕໍ່ຕ້ານການໃຫ້ສິນບົນ ແລະ ຕໍ່ຕ້ານການສໍ້ລາດບັງຫຼວງ ("ນະໂຍບາຍຂອງ ABAC") ເຊິ່ງຢຶດຖືບໍ່ຍອມຮັບຕໍ່ກັບການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງ ໃນທຸກຮູບແບບໃນການດໍາເນີນທຸລະກິດຂອງທະນາຄານ. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍ ຂອງ ABAC, ກະລຸນາເຂົ້າໄປເວັບໄຊ໌ຂອງທະນາຄານ.

22.2 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຈະປະຕິບັດຕາມນະໂຍບາຍຂອງ ABAC ຢ່າງເຄັ່ງຄັດ ແລະ ຈະບໍ່ມີສ່ວນຮ່ວມໃນການໃຫ້ສິນບົນ ຫຼື ການສໍ້ລາດບັງຫຼວງ ທີ່ຈະຖືວ່າຂັດກັບກົດໝາຍ ສປປ ລາວ:

ກ) ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ສະບັບເລກທີ 27/ສພຊ ລົງວັນທີ 18 ທັນວາ. ປີ 2012; ແລະ

ຂ) ກຸ່ມທະນາຄານ ພາບລົກ ນະໂຍບາຍຕໍ່ຕ້ານການໃຫ້ສິນບົນ ແລະ ຕ້ານການສໍ້ລາດບັງຫຼວງ ຫຼື ແນວທາງກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບກົດໝາຍຕ້ານການໃຫ້ສິນບົນ ແລະ ຕ້ານການສໍ້ລາດບັງຫຼວງ.

22.3 ທະນາຄານມີສິດຍົກເລີກຜະລິດຕະພັນ ແລະ/ຫຼື ການບໍລິການທີ່ສະໜອງໃຫ້ ຂ້າພະເຈົ້າ/ພວກຂ້າພະເຈົ້າ ທັນທີ ໃນກໍລະນີທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຖືກພົບເຫັນວ່າລະເມີດນະໂຍບາຍຂອງ ABAC ຫຼື ພົບວ່າມີສ່ວນກ່ຽວຂ້ອງກັບ ການໃຫ້ສິນບົນ ຫຼື ການກະທຳທີ່ຊີ້ເຖິງການສໍ້ລາດບັງຫຼວງ.

## 23. ເຫດສຸດວິໃສ.

23.1 ໃນກໍລະນີທີ່ທະນາຄານບໍ່ສາມາດປະຕິບັດພັນທະຂອງຕົນພາຍໃຕ້ຂໍ້ກຳນົດ ແລະ ເງື່ອນໄຂເຫຼົ່ານີ້ເນື່ອງຈາກເຫດຜົນຕ່າງໆ ທີ່ຢູ່ນອກເໜືອຈາກການຄວບຄຸມ ຂອງທະນາຄານຊຶ່ງລວມເຖິງແຕ່ບໍ່ຈຳກັດ: -

23.1.1 ການຂັດຂ້ອງ ຫຼື ຄວາມຜິດພາດໃນການດຳເນີນຂອງອຸປະກອນ, ລະບົບ ຫຼື ການເຊື່ອມຕໍ່ສາຍສົ່ງຕ່າງໆ ທີ່ບໍ່ສາມາດດຳເນີນງານຢ່າງປົກກະຕິ;

23.1.2 ໄຟໄໝ້, ແຜ່ນດິນໄຫວ, ນ້ຳຖ້ວມ, ການລະເບີດ, ເຫດການທາງທຳມະຊາດ, ການກໍ່ການຮ້າຍ, ສົງຄາມ (ປະກາດ ຫຼື ບໍ່ໄດ້ປະກາດ), ອຸປະຕິເຫດ, ການແຜ່ລະບາດຂອງໂລກ, ໂລກລະບາດໃຫຍ່, ການໂຈມຕີ, ການປິດລ້ອມ, ການຂັດແຍ້ງດ້ານແຮງງານ, ການຂັດຂວາງ, ການຈະລາຈົນ, ຄວາມບໍ່ສະຫງົບທາງສັງຄົມ ຫຼື ຊູນາມິ;

23.1.3 ຄວາມຂັດຂ້ອງ ຫຼື ການຫຍຸດສະງັກຂອງລະບົບຄົມມະນາຄົມ, ອິນເຕີເນັດ, ໄຟຟ້າ, ນ້ຳປະປາ ແລະ ນ້ຳມັນເຊື້ອໄຟ; ຫຼື

23.1.4 ກໍລະນີເຫດການອື່ນໆ ທີ່ມີລັກສະນະເປັນເຫດສຸດວິໃສ ເຊິ່ງໝາຍເຖິງເຫດການທີ່ບໍ່ສາມາດຄາດເດົາໄດ້ລ່ວງໜ້າ ເຮັດໃຫ້ທະນາຄານບໍ່ສາມາດປະຕິ ບັດພັນທະພາຍໃຕ້ຂໍ້ກຳນົດ ແລະ ເງື່ອນໄຂເຫຼົ່ານີ້, ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມຊັກຊ້າ, ການສູນເສຍ, ຄວາມເສຍຫາຍ ຫຼື ຄວາມບໍ່ສະ ດວກ. ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ອາດຈະໄດ້ຮັບອັນເນື່ອງມາຈາກຄວາມຂັດຂ້ອງໃນການປະຕິບັດການດັ່ງກ່າວ.

## 24. ອື່ນໆ.

24.1 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຂໍຢັ້ງຢືນວ່າກ່ອນ ຫຼື ໃນເວລາເປີດບັນຊີ ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ມີ/ບໍ່ມີ:

24.1.1 ກະທຳການລົ້ມລະລາຍ; ແລະ/ຫຼື

24.1.2 ຢູ່ພາຍໃຕ້ຂໍ້ມະຕິ ຫຼື ຄຳຮ້ອງຟ້ອງໃຫ້ຍົກເລີກກິດຈະການ ຫຼື ຄຳຮ້ອງກ່ຽວກັບການລົ້ມລະລາຍ ທີ່ຖືກດຳເນີນ ຫຼື ສະເໜີຕໍ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ

ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຕົກລົງເຫັນດີເພີ່ມຕື່ມອີກວ່າຖ້າ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫາກມີການຝ່າຝືນ/ລະເມີດຂໍ້ກຳນົດຂ້າງເທິງ ນີ້, ທະນາຄານ ມີສິດທີ່ຈະປິດບັນຊີນີ້ທຸກເວລາໂດຍບໍ່ມີການແຈ້ງລ່ວງໜ້າ.

24.2 ໂດຍການລົງນາມໃນແບບຟອມການເປີດບັນຊີທີ່ທະນາຄານກຳນົດ ແລະ ປະທັບກາຂອງອົງການຈັດຕັ້ງ ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ໄດ້ຢັ້ງຢືນ ແລະ ຮັບຊາບວ່າ ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ໄດ້ຮັບ/ໄດ້ອ່ານ ແລະ ທຳຄວາມເຂົ້າໃຈຂໍ້ກຳນົດ ແລະ ເງື່ອນໄຂສະບັບນີ້ຢ່າງຄົບຖ້ວນ ລວມເຖິງໜັງສືມອບອຳນາດ (ຖ້າມີ) ແລະ ຕົກລົງທີ່ຈະປະຕິບັດຕາມ ແລະ ຍອມຮັບຂໍ້ກຳນົດ ເງື່ອນໄຂທີ່ແກ້ໄຂ ຫຼື ການປ່ຽນແປງຕ່າງໆ ເຊິ່ງທະນາຄານອາດ ຈະແນະນຳ, ທົບທວນ, ປັບປຸງ ຫຼື ປ່ຽນແປງພາຍຫຼັງ. ໂດຍຂໍ້ມູນດັ່ງກ່າວຈະເຜີຍແຜ່ໃນເວັບໄຊທ໌ຂອງທະນາຄານ ແລະ/ຫຼື ຢູ່ໃນກະດານແຈ້ງການທີ່ສາຂາ ແລະ/ຫຼື ອາດຈະຕິດຕໍ່ກັບ ຂ້າພະເຈົ້າ/ພວກຂ້າພະເຈົ້າ ດ້ວຍວິທີອື່ນໆທີ່ໄດ້ຮັບການອະນຸມັດ.

24.3 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຕົກລົງເຫັນດີສືບຕໍ່ຮັກສາ ແລະ ດຳເນີນການບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ຫຼັງຈາກວັນທີ ທີ່ມີຜົນບັງຄັບໃຊ້ຂອງການແກ້ໄຂ ຫຼື ປ່ຽນແປງຂໍ້ກຳນົດ. ຂ້າພະເຈົ້າ/ພວກຂ້າພະເຈົ້າຖືວ່າໄດ້ຍອມຮັບເອົາຂໍ້ກຳນົດ ແລະ ເງື່ອນໄຂທີ່ແກ້ໄຂແລ້ວ ແລະ ຂໍ້ກຳນົດດັ່ງກ່າວຈະຖືເປັນຂໍ້ຜູກພັນກັບ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

24.4 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຂໍຕົກລົງທີ່ຈະຊົດໃຊ້ຄ່າເສຍຫາຍໃຫ້ແກ່ທະນາຄານໃນຖານະຜູ້ຮຽກເກັບເງິນ ສຳລັບຄວາມສູນເສຍ, ການຮຽກຮ້ອງ, ຂໍ້ຮຽກຮ້ອງ, ການດຳເນີນຄະດີ, ຄ່າໃຊ້ຈ່າຍ ແລະ ພາລະຜູກພັນອື່ນໃດທີ່ອາດເກີດຂຶ້ນກັບ ທະນາຄານ ບໍ່ວ່າເມື່ອໃດກໍຕາມ ອັນເນື່ອງມາຈາກແຊັກ, ໃບບິນ, ທະນາບັດ, ເອກະສານທາງການເງິນ (Draft), ໃບຮັບເງິນປັນຜົນ ຫຼື ເອກະສານທາງການເງິນອື່ນໆທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ນຳມາສະເໜີຕໍ່ທະນາຄານເພື່ອຮຽກເກັບ ແລະ ຈະຖືວ່າທະນາຄານໄດ້ດຳເນີນການເກັບເງິນດັ່ງກ່າວຕາມຄຳຮ້ອງຂໍທີ່ຊັດເຈນຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໃນທຸກກໍລະນີ ເພື່ອເປັນການນຳເງິນເຂົ້າບັນຊີຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

24.5 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ຕົກລົງເຫັນດີ ແລະ ຈະປະຕິບັດຕາມດັ່ງນີ້:

24.1.1 ຫ້າມເປີດເຜີຍຕົວຕົນການເຂົ້າເຖິງ (ID) ແລະ ຕົວເລກລະຫັດ/ລະຫັດຜ່ານໃຫ້ແກ່ບຸກຄົນຜູ້ອື່ນ ຜ່ານທາງອີເມລ໌ທີ່ບໍ່ໄດ້ຖືກຮອງຮັບ, ໂທລະສັບ ຫຼື ໃນເວັບໄຊທ໌ທີ່ບໍ່ໄດ້ຮັບການອານຸມັດຈາກ ທະນາຄານ ແລະ ຈະດຳເນີນທຸກການທຸກຂັ້ນຕອນທີ່ເໝາະສົມເພື່ອຮັກສາຄວາມປອດໄພຂອງລະຫັດ ຜ່ານ ແລະ ຈະກວດສອບໃຫ້ອຸປະກອນຮັກສາຄວາມປອດໄພຕະຫຼອດເວລາ; ແລະ

24.1.2 ກວດສອບການແຈ້ງເຕືອນທຸລະກຳທັງໝົດໃຫ້ທັນເວລາ ແລະ ກວດສອບຍອດເງິນໃນບັນຊີ, ລາຍງານການເຄື່ອນໄຫວທາງບັນຊີທະນາຄານ ເພື່ອ ກວດທຸລະກຳທີ່ບໍ່ໄດ້ຮັບອະນຸຍາດ, ຂໍ້ຜິດພາດ ຫຼື ຄວາມບໍ່ຖືກຕ້ອງ ແລະ ແຈ້ງໃຫ້ທະນາຄານຮັບຮູ້ໂດຍໄວທີ່ສຸດເມື່ອກວດພົບຄວາມຜິດປົກກະຕິດັ່ງກ່າວ.

24.6 ຂ້າພະເຈົ້າ/ພວກຂ້າພະເຈົ້າ/ອົງການຈັດຕັ້ງ ສືບຕໍ່ລາຍງານໃຫ້ແກ່ທະນາຄານໂດຍໄວທີ່ສຸດເມື່ອພົບບັນຫາຂອງການລະເມີດຄວາມປອດໄພຂອງລະຫັດຜ່ານ ຫຼື ອຸປະກອນຮັກສາຄວາມປອດໄພສູນຫາຍ ແລະ ຕົກລົງທີ່ຈະລາຍງານຂໍ້ຜິດພາດ ຫຼື ຄວາມຄາດເຄື່ອນໃນບັນຊີທັນທີ ຫາກທະນາຄານບໍ່ໄດ້ຮັບແຈ້ງການໃດໆເປັນລາຍລັກ

ອັກສອນພາຍໃນຊາວເອັດ (21) ວັນລັດຖະການຕາມປະຕິທິນ. ນັບຈາກວັນທີແຈ້ງການຂອງຄວາມຜິດພາດ ຫຼື ຄວາມຄາດເຄື່ອນໃດໆກ່ຽວກັບການຖອນ ຫຼື ການຝາກເງິນໃນບັນຊີດັ່ງກ່າວ. ທະນາຄານຈະຖືວ່າ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໄດ້ຍອມຮັບລາຍການດັ່ງກ່າວທີ່ເກີດຂຶ້ນຂອງລາຍການສຸດທ້າຍໃນບັນຊີວ່າເປັນຂໍ້ມູນທີ່ຖືກຕ້ອງ.

24.7 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຍິນຍອມ ແລະ ມອບອຳນາດໃຫ້ທະນາຄານໂດຍບໍ່ອາດເພີກຖອນໄດ້ ໃນການຖືວ່າບັນທຶກທຸລະກຳໃດໆທີ່ດຳເນີນການຜ່ານບັນຊີດັ່ງກ່າວຂອງ ທະນາຄານ ລວມເຖິງການບໍ່ຈຳກັດພຽງທຸລະກຳທີ່ດຳເນີນການຜ່ານໄປສະນີ, ໂທລະສັບ, ອິນເຕີເນັດ ແລະ ເຄື່ອງບໍລິການຕົນເອງ ໂດຍອ້າງວ່າເປັນການກະທຳຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ ເປັນຫຼັກຖານຂອງທຸລະກຳທີ່ ຂ້າພະເຈົ້າ/ພວກຂ້າພະເຈົ້າ ໄດ້ດຳເນີນການຢ່າງຖືກຕ້ອງ ແລະ ໃຫ້ທະນາຄານຫັກບັນຊີເພື່ອຊຳລະທຸລະກຳດັ່ງກ່າວອາດບໍ່ໄດ້ຮັບອານຸຍາດຈາກ ຂ້າພະເຈົ້າ/ພວກຂ້າພະເຈົ້າ ກໍຕາມ ແລະ ເຖິງແມ່ນວ່າການອະນຸຍາດ ຫຼື ບັນທຶກການຫັກບັນຊີອາດຈະບໍ່ມີລາຍເຊັນຂອງ ຂ້າພະເຈົ້າ/ພວກຂ້າພະເຈົ້າ.

24.8 ທະນາຄານສະຫງວນສິດດັ່ງນີ້:

24.8.1 ໃນການປ່ຽນແປງ, ແກ້ໄຂ ຫຼື ປັບປຸງຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ, ຄຸນສົມບັດ ແລະ ສິດທິປະໂຫຍດ ຂອງບັນຊີໂດຍແຈ້ງລ່ວງໜ້າໃຫ້ ຂ້າພະເຈົ້າ/ ພວກຂ້າພະເຈົ້າ ຊາວເອັດ (21) ວັນລັດຖະການຕາມປະຕິທິນ ແລະ/ຫຼື ການສະແດງ ແຈ້ງການຂອງການປ່ຽນແປງຢູ່ສະຖານທີ່ ແລະ ເວັບໄຊທ໌ຂອງທະນາຄານ;

24.8.2 ເພື່ອປ້ອງກັນ ການດຳເນີນການຕ່າງໆໃນບັນຊີນີ້ ຫາກທະນາຄານສົງໃສວ່າມີການໃຊ້ບັນຊີເພື່ອຈຸດປະສົງທີ່ຜິດກົດໝາຍ.

24.9 ຂໍ້ກຳນົດ ແລະ ເງື່ອນໄຂໃນນີ້ຈະຢູ່ພາຍໃຕ້ຄຳສັ່ງຈາກທະນາຄານແຫ່ງ ສປປ ລາວ (ທຫລ) ຫຼື ຕາມການກຳນົດ ຫຼື ກຳນົດໂດຍໜ່ວຍງານຄຸ້ມຄອງຕາມແຕ່ລະໄລຍະ.

24.10 ຂ້າພະເຈົ້າ/ພວກຂ້າພະເຈົ້າ ຍິນຍອມ ແລະ ອະນຸຍາດໃຫ້ທະນາຄານເປີດເຜີຍຂໍ້ມູນຕໍ່ທະນາຄານ ແຫ່ງ ສປປ ລາວ (ທຫລ) ໜ່ວຍງານ ຫຼື ອົງກອນທີ່ມີອຳນາດເໜືອທະນາຄານ ຜູ້ຄໍ້າປະກັນ/ຜູ້ໃຫ້ຫຼັກປະກັນ ແລະ/ຫຼື ທະນາຍຄວາມ ຫຼື ໜ່ວຍງານຕິດຕາມໜີ້ ໂດຍບໍ່ຕ້ອງແຈ້ງລ່ວງໜ້າ ແລະ ບໍ່ມີຄວາມຮັບຜິດໃດໆ ຂໍ້ມູນດັ່ງກ່າວການກ່ຽວຂ້ອງກັບກິດຈະການບັນຊີທະນາຄານ ຫຼື ພຶດຕິກຳການໃຊ້ບັນຊີຂອງຂ້າພະເຈົ້າ (ລວມເຖິງສະຖານະເຄຼດິດຂອງຂ້າພະເຈົ້າ) ຕາມຂອບເຂດ ແລະ ວັດຖຸປະສົງທີ່ທະນາຄານເຫັນວ່າຈຳເປັນ ຫຼື ເໝາະສົມ.

24.10.1 ຂໍ້ກຳນົດ ແລະ ເງື່ອນໄຂຂ້າງເທິງເປັນການກຳນົດ ກົດທົ່ວໄປກ່ຽວກັບການເປີດບັນຊີ ແລະ ການດຳເນີນການຂອງບັນຊີເງິນຝາກປະຢັດເຊິ່ງອາດຈະມີການປ່ຽນແປງຂຶ້ນຢູ່ກັບປະເພດຜະລິດຕະພັນບັນຊີເງິນຝາກປະຢັດ.

**<u>ຂໍ້ກຳນົດ ແລະ ເງື່ອນໄຂສະເພາະ.</u>**

1. ບັນຊີເງິນຝາກປະຢັດ.

1.1 ອັດຕາດອກເບ້ຍແມ່ນຈະຄິດໄລ່ຕາມຍອດຄົງເຫຼືອປະຈຳວັນໃນບັນຊີ ໂດຍອີງຕາມອັດຕາດອກເບ້ຍໃນແຕ່ລະໄລຍະ ແລະ ດອກເບ້ຍຈະຖືກໂອນເຂົ້າບັນຊີໃນທຸກໆທ້າຍເດືອນ.

ໃນກໍລະນີມີຂໍ້ຂັດແຍ່ງ ຫຼື ຄວາມຄາດເຄື່ອນແຕກຕ່າງທາງດ້ານການສື່ສານລະຫວ່າງຂໍ້ຄວາມພາສາອັງກິດ ແລະ ການແປເປັນພາສາລາວນີ້
ແມ່ນໃຫ້ຖືເອົາເອກະສານພາສາອັງກິດເປັນຫຼັກ.

[ສ່ວນທີ່ເຫຼືອຂອງເອກະສານໜ້ານີ້ ຖືກປະໄວ້ໂດຍເຈດຕະນາ]